**ແຈ້ງການກ່ຽວກັບການຕົກລົງເຫັນພ້ອມນຳກັນ ແລະ ການຟັງເຣື່ອງຄວາມຍຸຕິທັມ ສຳລັບ *T.R. v. Quigley*, No. C09-1677 – TSZ, ສຳນວນຄະດີກ່ຽວກັບການປິ່ນປົວສຸຂະພາບໂຣກຈິດໄກ້ສິດຢູ່ຕາມເຮືອນ ແລະ ຊຸມນຸມຊົນສຳລັບເດັກນ້ອຍ ແລະ ຊາວໜຸ່ມ**

*ສຳນວນຄະດີ T.R. et al. v. Kevin Quigley and Dorothy Teeter*, No. C09-1677 – TSZ (“*T.R.*”), ກ່ຽວພັນນຳການເຂົ້າເຖິງການປິ່ນປົວສຸຂະພາບໂຣກຈິດໄກ້ສິດຢູ່ຕາມເຮືອນ ແລະ ຊຸມນຸມຊົນສຳລັບຊາວໜຸ່ມຜູ້ທີ່ມີປະກັນພັຍໂດຍຜ່ານເມດິເຄດ໌. ທຸກພາກສ່ວນໄດ້ບັນລຸການຕົກລົງເຫັນພ້ອມນຳກັນຢູ່ໃນສຳນວນຄະດີທີ່ຈະເພີ້ມການເຂົ້າເຖິງການປະສານງານການປິ່ນປົວໄກ້ສິດ, ການປິ່ນປົວສຸຂະພາບໂຣກຈິດຢູ່ຕາມເຮືອນ ແລະ ຊຸມນຸມຊົນ, ແລະ ພາວະເດືອດຮ້ອນເຄື່ອນທີ່ ແລະ ການເຮັດໃຫ້ທຸ່ນທ່ຽງ, ທົ່ວທັງຣັດສຳລັບຊາວໜຸ່ມຜູ້ທີ່ມີເງື່ອນໄຂໄດ້ຮັບເມດິເຄດ໌ ຜູ້ທີ່ມີຄວາມຕ້ອງການພະຍາບານສຳລັບການປິ່ນປົວເຫລົ່ານີ້. ການປິ່ນປົວຈະຖືກດຳເນີນການກວມເອົາຣະຍະເວລາຫ້າປີ. ທຸກພາກສ່ວນໄດ້ສະເນີການຕົກລົງເຫັນພ້ອມນຳກັນອັນນີ້ໃຫ້ສານຊຶ່ງໄດ້ອະນຸມັດການຕົກລົງເຫັນພ້ອມນຳກັນໃນຂັ້ນຕົ້ນ. ທ່ານດຽວນີ້ຈະມີໂອກາດທີ່ຈະກວດເບິ່ງຄືນໃບຕົກລົງເຫັນພ້ອມນຳກັນສຳລັບຕົວທ່ານເອງ ແລະ ບອກໃຫ້ສານຮູ້ຈັກວ່າທ່ານຄິດວ່າຈັ່ງໃດກ່ຽວກັບການຕົກລົງເຫັນພ້ອມນຳກັນອັນນີ້.

ສານຈະຈັດການຟັງເຣື່ອງເພື່ອຄວາມຍຸຕິທັມຂຶ້ນ. ໃນການພັງເຣື່ອງອັນນີ້, ສານຈະພິຈາຣະນາເບິ່ງຄວາມເຫັນທີ່ເຂົາເຈົ້າໄດ້ຮັບຈາກປະຊາຊົນຜູ້ທີ່ສົນໃຈນຳໃນການຕົກລົງເຫັນພ້ອມນຳກັນອັນນີ້. ແລ້ວສານຈະທຳການຕັດສິນຂັ້ນສຸດທ້າຍກ່ຽວກັບວ່າການຕົກລົງເຫັນພ້ອມນຳກັນອັນນີ້ແມ່ນຍຸຕິທັມ, ສົມເຫດສົມຜົນ, ແລະ ດີພຽງພໍ ຫລື ບໍ່.

ການຟ້ອງຂຶ້ນສານ *T.R.* ເປັນການຟ້ອງຂຶ້ນສານສຳລັບກຸ່ມຄົນ. ຢູ່ໃນການຟ້ອງຂຶ້ນສານສຳລັບກຸ່ມຄົນ, ບຸກຄົນບໍ່ພໍເທົ່າໃດຄົນຈະເປັນຕົວແທນຄົນຫລາຍໆຄົນ (ອີງໃສ່ວ່າເປັນ“ກຸ່ມຄົນ”) ຜູ້ທີ່ມີບັນຫາທາງກົດໝາຍແນວດຽວກັນ. ສຳນວນຄະດີໄດ້ຖືກຍື່ນໃນປີ 2009 ໂດຍຄົນໜຸ່ມສິບຄົນ (ອີງໃສ່ວ່າແມ່ນ “ຜູ້ຕາງໜ້າກຸ່ມ”) . ພວກເຂົາເຈົ້າແຕ່ລະຄົນມີເງື່ອນໄຂໄດ້ຮັບເມດິເຄດ໌ ແລະ ມີບັນຫານຳພະຍາດໂຣກຈິດ. ໃນເດືອນຈຸນລາຍ 2010, ສານໄດ້ຕັດສິນສຳນວນຄະດີອອກມາຊຶ່ງຈະຖືກໃຊ້ໃສ່ທຸກໆຄົນຢູ່ໃນກຸ່ມ. ເມື່ອສານທຳການຕັດສິນອັນນີ້, ເຂົາໄດ້ຕີຄວາມໝາຍຂອງສະມາຊິກຂອງກຸ່ມວ່າແມ່ນທຸກໆຄົນອາຍຸຕ່ຳກວ່າ 21 ປີຜູ້ທີ່ດຽວນີ້ ຫລື ຢູ່ໃນອະນາຄົດ (1) ສອດຄ່ອງ ຫລື ຈະສອດຄ່ອງນຳກົດເກນເງື່ອນໄຂໄດ້ຮັບການເງິນເມດິເຄດ໌ຂອງຣັດວໍຊິງຕັນ; (2)ມີພະຍາດ ຫລື ບັນຫາໂຣກຈິດຕາມທີ່ຖືກຄົ້ນພົບໂດຍຜູ້ເຮັດວຽກປິ່ນປົວໃຫ້ຫາຍຜູ້ທີ່ມີໃບອະນຸຍາດ, ຫລື ໄດ້ມີການກວດກັ່ນເບິ່ງຫລືການຕີຣາຄາປະເມີນຜົນຖືກດຳເນີນການເບິ່ງໂດຍຜູ້ປະຕິບັດໃນຂະແນງນີ້, ໄດ້ຖືກພິຈາຣະນາພົບເຫັນວ່າມີພະຍາດ ຫລື ບັນຫາໂຣກຈິດ; (3) ມີຄວາມບໍ່ສົມບູນໃນການທຳງານ, ຊຶ່ງຈະຣົບກວນຢ່າງຮ້າຍແຮງນຳ ຫລື ຈຳກັດຢ່າງຫລວງຫລາຍໃນຄວາມສາມາດທີ່ຈະທຳງານຢູ່ໃນຄອບຄົວ, ໂຮງຮຽນ ຫລື ຢູ່ຕາມຊຸມນຸມຊົນ; ແລະ (4) ສຳລັບຜູ້ທີ່ມີການປິ່ນປົວຢູ່ຕາມເຮືອນ ແລະ ຊຸມນຸມຊົນທີ່ຖືກຄຸ້ມກັນໂດຍເມດິເຄດ໌ຈະຖືກແນະນຳບອກໂດຍຜູ້ປະຕິບັດທີ່ມີໃບອະນຸຍາດ. ເພາະສະນັ້ນແລ້ວ, ຜູ້ຍື່ນຟ້ອງຄະດີຢູ່ໃນສຳນວນຄະດີອັນນີ້ແມ່ນທຸກໆຄົນຜູ້ທີ່ສອດຄ່ອງນຳການຕີຄວາມໝາຍຂອງກຸ່ມ, ລວມທັງຜູ້ຕາງໜ້າຂອງກຸ່ມ.

ສະມາຊິກຂອງໂຈດ (ຜູ້ຟ້ອງຄະດີ) ໄດ້ຖືກເປັນຕົວແທນໂດຍບໍຣິສັດທະນາຍຄວາມຫ້າບໍຣິສັດ. ບໍຣິສັດເຫລົ່ານີ້ແມ່ນ Disability Rights Washington, the National Center for Youth Law, the National Health Law Program, Young Minds Advocacy Project, ແລະ Perkins Coie, LLP. ສານໄດ້ກວດເບິ່ງຄືນໃນຄຸນນະວຸດທິ ແລະ ປະສົບປະການຂອງບໍຣິສັດເຫລົ່ານີ້. ແລ້ວສານຈຶ່ງໄດ້ແຕ່ງຕັ້ງພວກເຂົາເຈົ້າໃຫ້ເປັນທະນາຍຄວາມສຳລັບກຸ່ມ.
ຈຳເລີຍ (ຜູ້ຖືກຟ້ອງ) ແມ່ນ Washington State Department of Social and Health Services ແລະ the Washington State Health Care Authority.

ຈຸດປະສົງຂອງການຕົກລົງເຫັນພ້ອມນຳກັນອັນນີ້ແມ່ນເພື່ອຈະເພີ້ມການເຂົ້າເຖິງຂຶ້ນສຳລັບສະມາຊິກຂອງກຸ່ມເຖິງການປິ່ນປົວສຸຂະພາບໂຣກຈິດໄກ້ສິດຢູ່ຕາມເຮືອນ ແລະ ຊຸມນຸມຊົນທີ່ຖືກອອກທຶນໃຫ້ໂດຍເມດິເຄດ໌. ການປິ່ນປົວເຫລົ່ານີ້ຈະຖືກເອີ້ນວ່າ Wraparound with Intensive Services (“WISe”). ການປິ່ນປົວເຫລົ່ານີ້ຈະບໍ່ມີໄວ້ໃຫ້ແກ່ສະມາຊິກຂອງກຸ່ມທຸກໆຄົນໂດຍທັນທີໂລດ, ເຖິງຢ່າງໃດກໍຕາມ, ພາຍໃຕ້ການຕົກລົງເຫັນພ້ອມນຳກັນ, ມັນອາດຈະໃຊ້ເວລານານເທົ່ານານເຖິງຫ້າປີເພື່ອຈະເພີ້ມປາຣິມານຂອງການປິ່ນປົວຂຶ້ນເພື່ອຈະເອົາການປິ່ນປົວໃຫ້ແກ່ທຸກໆຄົນຜູ້ທີ່ມີເງື່ອນໄ

ຂໄດ້ຮັບທົ່ວຣັດ. ເມື່ອໃດເງື່ອນໄຂຂອງມັນໄດ້ຖືກປະຕິບັດຕາມໝົດແລ້ວ, ການຕົກລົງເຫັນພ້ອມນຳກັນບອກວ່າ ສະມາຊິກຂອງກຸ່ມຜູ້ທີ່ມີເງື່ອນໄຂໄດ້ຮັບທຸກໆຄົນຈະໄດ້ຮັບການປິ່ນປົວ WISe ທັນເວລາຊຶ່ງຈຳເປັນທາງດ້ານການແພດ.

ການຕົກລົງເຫັນພ້ອມນຳກັນມີສາມພາກສ່ວນພື້ນຖານ.

(1) ເປົ້າໝາຍ

ເປົ້າໝາຍເອົາໂຄງຮ່າງ ແລະ ການຊີ້ນຳທາງໃຫ້ສຳລັບແຜນການຕົກລົງກັນ. ມັນຈະຊ່ວຍອະທິບາຍທຸກໆພາກສ່ວນ ຂອງໃບຕົກລົງເຫັນພ້ອມນຳກັນ, ລວມທັງຄວາມມຸ່ງໝັ້ນ ແລະ ກົດເກນຂອງການອອກໄປ. ມັນຈະຊີ້ນຳທາງການພັດທະນາລະບົບໃຫ້ການບໍລິການສຳລັບອະນາຄົດ.

(2) ຄວາມມຸ່ງໝັ້ນ

ຄວາມມຸ່ງໝັ້ນແມ່ນສິ່ງຕ່າງໆ ຫລື ການກະທຳທີ່ຈຳເລີຍຈະເຮັດເພື່ອຈະອອກແບບ ແລະ ສິ່ງຕໍ່ WISe. ຄວາມມຸ່ງໝັ້ນໄດ້ຖືກບົ່ງຢູ່ໃນໃບຕົກລົງເຫັນພ້ອມນຳກັນ ແລະ ຈະຖືກບັນຣະຍາຍຕໍ່ໄປອີກຢູ່ໃນແຜນການວາງໃຊ້. ຈຳເລີຍໄດ້ສັນຍາວ່າຈະເຮັດຕາມຄວາມມຸ່ງໝັ້ນເຫລົ່ານີ້ໃນຣະຫວ່າງເວລາທີ່ສຳນວນຄະດີຍັງຢູ່ຕໍ່ໜ້າສານຢູ່.

(3) ກົດເກນການອອກໄປ

ກົດເກນການອອກໄປແມ່ນສິ່ງຕ່າງໆ ຫລື ຜົນອອກມາທີ່ສານຈະໃຊ້ເພື່ອຈະຕັດສິນວ່າຈຳເລີຍໄດ້ເຮັດພຽງພໍບໍ່ເພື່ອຈະອະນຸຍາດໃຫ້ສຳນວນຄະດີທີ່ຈະຖືກເລີກລົ້ມໄປ. ຈຳເລີຍບໍ່ຕ້ອງໄດ້ເຮັດທຸກໆຢ່າງໃຫ້ສົມບູນໝົດ. ເຂົາເຈົ້າຕ້ອງໄດ້ສະແດງໃຫ້ສານເຫັນວ່າເຂົາເຈົ້າໄດ້ "ປະຕິບັດຕາມຫລາຍທີ່ສຸດ" ນຳກົດເກນການອອກໄປທີ່ຕ້ອງໄດ້ເຮັດ. ຖ້າຫາກວ່າເຂົາເຈົ້າສະແດງໃຫ້ເຫັນອັນນີ້, ສຳນວນຄະດີຈະສິ້ນສຸດລົງ.

## I. ເປົ້າໝາຍ

ເປົ້າໝາຍໃຫຍ່ຂອງການຕົກລົງເຫັນພ້ອມນຳກັນໃບນີ້ແມ່ນເພື່ອຈະຊີ້ບອກ, ກັ່ນເບິ່ງ ແລະ ຕີຣາຄາປະເມີນຜົນສະມາຊິກກຸ່ມທີ່ອາດເປັນໄປໄດ້, ແລະ ເອົາການປິ່ນປົວ WISe ໃຫ້ແກ່ສະມາຊິກຜູ້ທີ່ມີເງື່ອນໄຂໄດ້ຮັບທີ່ຕ້ອງການມັນ. ກົນຕົກລົງເຫັນພ້ອມນຳກັນມີເປົ້າໝາຍສຳຄັນແນວອື່ນອີກ.

- WISe ຈະຖືກເອົາໃຫ້ທົ່ວຣັດ. ການປິ່ນປົວຈະທັນຕາມເວລາ. ມັນຈະມີການປິ່ນປົວພຽງພໍເພື່ອຈະຕອບສະນອງຄວາມຕ້ອງການ. ການປິ່ນປົວຈະຖືກເອົາໃຫ້ໃນແບບມີຜົນໃຊ້ໄດ້ດີ, ແລະ ຜົນໃຊ້ໄດ້ຈະຖືກວັດແທກໂດຍຫລັກຖານ. ການປິ່ນປົວຈະຖືກເຮັດເປັນສ່ວນບຸກຄົນໄປໃສ່ຄວາມຕ້ອງການຂອງສະມາຊິກກຸ່ມແຕ່ລະຄົນ. ການປິ່ນປົວຈະສອດຄ່ອງນຳແບບຮ່າງຂອງໂຄງການ WISe. ການເອົາການປິ່ນປົວໃຫ້ຈະປະຕິບັດຕາມກົດໝາຍ ແລະ ກົດຣະບຽບຂອງເມດີເຄດ໌ຂອງຣັດ ແລະ ຣັດຖະບານກາງ.
- ສະມາຊິກກຸ່ມຜູ້ທີ່ຖືກປະຕິເສດການປິ່ນປົວຈະຖືກບອກວ່າເຂົາເຈົ້າມີສິດທີ່ຈະຂໍອຸທອນ, ແລະ ຈະມີການຟັງເຣື່ອງຂ້ອງໜ້າຈ່າສານທີ່ບໍ່ລຳອຽງ.
- ອົງການ ແລະ ຜູ້ໃຫ້ການປິ່ນປົວທີ່ຮັບໃຊ້ເດັກນ້ອຍຈະປະສານງານການອູ້ມຊູທີ່ເຂົາເຈົ້າເອົາໃຫ້ແກ່ສະມາຊິກກຸ່ມ. ອັນນີ້ຈະສົ່ງເສີມການໃຊ້ໄດ້ຜົນດີຂອງການປິ່ນປົວ ແລະ ສົ່ງເສີມຜົນອອກມາຂອງຄອບຄົວ ແລະ ຊາວໜຸ່ມ. ການປະສານງານຈະລຸດຜ່ອນການຂາດຕອນຂອງການປິ່ນປົວສຳລັບສະມາຊິກກຸ່ມ, ຫລີກເວັ້ນການ ຊ້ອນກັນ ແລະ ການຊົ້ນເປືອງ, ແລະ ລຸດຄ່າໃຊ້ຈ່າຍລົງ;
- ມັນຈະມີການສຶກສາ, ການຝຶກຝົນ, ການຊີ້ນຳ ແລະ ການສິດສອນຂອງຜູ້ປິ່ນປົວ, ຊາວໜຸ່ມ ແລະ ຄອບຄົວຂອງເຂົາເຈົ້າ.

- ອີງການບ່ອນທີ່ຮັບໃຊ້ເດັກນ້ອຍ, ຊາວໜຸ່ມ ແລະ ຄອບຄົວ, ແລະ ຄົນອື່ນໆຈະເຮັດວຽກຮ່ວມກັນເພື່ອຈະທໍາການຕັດສິນໃຈກ່ຽວກັບການປ່ຽນແປງໃນການຕົກລົງເຫັນພ້ອມນໍາກັນໄດ້ຖືກວາງໃຊ້ແນວໃດ. ອັນນີ້ຖືກ ເອີ້ນວ່າ "ໂຄງຮ່າງການປົກຄອງ" ຂອງການຕົກລົງເຫັນພ້ອມນໍາກັນ.
- ການຕົກລົງເຫັນພ້ອມນໍາກັນຈະນໍາເອົາການປ່ຽນແປງຊຶ່ງຈະລຸດຜ່ອນການນອນໂຮງໝໍ ແລະ ການຈັດໃຫ້ຢູ່ນອກເຮືອນລົງ.
- ການເຂົ້າເຖິງ WISe ພາຍໃຕ້ການຕົກລົງເຫັນພ້ອມນໍາກັນຈະຊ່ວຍຮັກສາເດັກນ້ອຍໃຫ້ປອດພັຍ, ຢູ່ເຮືອນ, ແລະຢູ່ໂຮງຮຽນໃຫ້ມີຜົນຄືບໜ້າ; ຫລີກເວັ້ນຄວາມບົກພ່ອງ; ສົ່ງເສີມການພັດທະນາຊາວໜຸ່ມ; ແລະຍົກສູງໂອກາດທີ່ຈະເຕີບໂຕຂອງສະມາຊິກກຸ່ມໄປສູ່ການເປັນຜູ້ໃຫຍ່ທີ່ແຂງແຮງ ແລະ ບໍ່ອື່ງນໍາໃຜ.

## II. ຄວາມມຸ່ງໝັ້ນ

ການຕົກລົງເຫັນພ້ອມນໍາກັນບົ່ງໃຫ້ຈໍາເລີຍທີ່ຈະປະຕິບັດຕາມຢ່າງຫລວງຫລາຍດ້ວຍຄວາມມຸ່ງໝັ້ນອັນລະອຽດຫລາຍໆຢ່າງ. ຄວາມມຸ່ງໝັ້ນ ແລະ ເສັ້ນກໍານົດເວລາຈະຖືກບັງຄັບໃຊ້ໂດຍຈ່າສານຈົນກວ່າຈະສິ້ນສຸດລົງ ແລະ ຖືກຍົກເລີກ. ເສັ້ນກໍານົດເວລາອາດຈະປ່ຽນແປງຖ້າຫາກວ່າຈໍາເລີຍ, ໂຈດ, ແລະ ຈ່າສານເຫັນພ້ອມນໍາກັນ.

ຄວາມມຸ່ງໝັ້ນຈຸດໃຫຍ່ລວມເອົາ:

### A. ການເຂົ້າເຖິງ WISe Access ແລະ ການໃຫ້ການບໍຣິການ

ຈໍາເລີຍເຫັນພ້ອມນໍາທີ່ຈະເອົາການຄຸ້ມກັນເມດິເຄດ໌ຕໍ່ລົງໄປນີ້ໃຫ້ຊຶ່ງຈະກວມເອົາການປິ່ນປົວສຸຂະພາບໂຣກຈິດໃຫ້ແກ່ສະມາຊິກກຸ່ມ: 1) ການປະສານງານການປິ່ນປົວໄກ້ສິດ, (2) ການປິ່ນປົວໄກ້ສິດຢູ່ຕາມເຮືອນ ແລະ ຊຸມນຸມຊົນ, ແລະ (3) ການບໍຣິການເຂົ້າແຊກແຊງໃນພາວະເດືອດຮ້ອນ ແລະ ການເຮັດໃຫ້ຫຸ່ນທ່ຽງ. ການບໍຣິການສາມຊະນິດເຫລົ່ານີ້ຖືກເອີ້ນວ່າແມ່ນ WISe. WISe ຄໍາສັ້ນສໍາລັບ "ຫຸ້ມຫໍ່ດ້ວຍການປິ່ນປົວໄກ້ສິດ." ການບັນຣະຍາຍຢ່າງລະອຽດຂອງການບໍຣິການເຫລົ່ານີ້ແມ່ນມີໄວ້ໃຫ້ຢູ່ໃນຕາຕະລາງ A ຂອງໃບຕົກລົງເຫັນພ້ອມນໍາກັນ.

### B. ການບໍຣິການງົບປະມານຂອງຣັດສໍາລັບປີ 2014 ແລະ ການບໍຣິການໃຫ້ໂຈດຜູ້ທີ່ຖືກບົ່ງຊື່

ໃນເດືອນແຈນຍູຣີ 2014, ຈໍາເລີຍຈະເລີ້ມຕົ້ນການຜັນປ່ຽນຜູ້ຮັບການປິ່ນປົວສຸຂະພາບໂຣກຈິດໄກ້ສິດທີ່ມີຢູ່ໃນປັດຈຸບັນມາສູ່ WISe. ອັນນີ້ຈະຖືກເຮັດໃຫ້ແລ້ວຢູ່ຕາມສະຖານທີ່ບ່ອນທີ່ມີການປິ່ນປົວ ແລະ ເງິນທຶນພຽງພໍເພື່ອຈະຕອບສະນອງຄວາມຕ້ອງການ.

### C. ການພັດທະນາ ແລະ ການຝຶກຝົນກໍາລັງພະນັກງານ

ຈໍາເລີຍຈະກໍ່ຕັ້ງກຸ່ມຄົນຂຶ້ນມາເພື່ອຈະຊອກຫາ ແລະ ຝຶກຝົນຜູ້ໃຫ້ການປິ່ນປົວ WISe. ຄົນກຸ່ມນີ້ຈະປະຕິບັດງານໂດຍບໍ່ອື່ງນໍາໃຜຈາກຣັດ. ມັນຈະຖືກນໍາພາຮ່ວມກັນໂດຍຊາວໜຸ່ມ ແລະ ຄອບຄົວ, ຫ້ອງການຂອງຣັດ, ແລະ ມະຫາວິທະຍາລັຍຮ່ວມງານ. ກຸ່ມນີ້ຈະອອກແບບໂຄງການຝຶກຝົນທີ່ໃຊ້ການໄດ້. ການຝຶກຝົນຈະລວມເອົາການສຶກສາ, ການນໍາພາ, ການສິດສອນ, ແລະ ການຊ່ວຍເຫລືອທາງດ້ານວິສະວະກອນໃຫ້ແກ່ຫ້ອງການໃນການເອົາການປິ່ນປົວ WISe ໃຫ້. ການຝຶກຝົນຈະຖືກເອົາໃຫ້ຕາມທ້ອງຖິ່ນ ແລະ ທົ່ວຣັດ. ການຝຶກຝົນຈະຊ່ວຍຜູ້ໃຫ້ການປິ່ນປົວ WISe ທີ່ຈະສອດຄ່ອງນໍາມາດຕະຖານຄຸນນະພາບ.

### D. ການດໍາເນີນການທາງສານສໍາລັບສະມາຊິກກຸ່ມ

ສະມາຊິກກຸ່ມມີສິດທີ່ຈະຄັດຄ້ານຕໍ່ຄໍາຕັດສິນກ່ຽວກັບການປິ່ນປົວຂອງເຂົາເຈົ້າ. ຖ້າຫາກວ່າເຂົາເຈົ້າຄັດຄ້ານ, ເຂົາເຈົ້າຈະໄດ້ການຟັງເຣື່ອງ. ໃນເວລາຟັງເຣື່ອງ, ບຸກຄົນທີ່ບໍ່ລໍາອຽງຈະທໍາການຕັດສິນ. ອັນນີ້ຖືກເອີ້ນວ່າການດໍາເນີນການ ທາງສານ. ຈໍາເລີຍຈະບົ່ງໃຫ້ໂຄງການ Prepaid Inpatient Health Plans (PIHPs) (ເປັນທີ່ຮູ້ຈັກກັນອີກວ່າແມ່ນສາຍງານອັູມຊູທ້ອງຖິ່ນ) ບອກສະມາຊິກກຸ່ມກ່ຽວກັບສິດທິຂອງເຂົາເຈົ້າໃນການດໍາເນີນການທາງສານ. ໂຄງການ PIHP

ຈະເຮັດອັນນີ້ໄດ້ໂດຍການສົ່ງໃບແຈ້ງການໄປໃຫ້. ໃບແຈ້ງການໃບນີ້ຈະແຈ້ງບອກສະມາຊິກກຸ່ມກ່ຽວກັບສິດທິ ໃນການດຳເນີນການທາງສານຂອງເຂົາເຈົ້າໃນທຸກໆເວລາທີ່ PIHP ຈະປະຕິເສດ, ຕັດ ຫລື ລຸດຜ່ອນການປິ່ນປົວລົງ, ຫລື ສະມາຊິກກຸ່ມບໍ່ເຫັນພ້ອມນຳຄຳແນະນຳເຣື່ອງການປິ່ນປົວອັນເຈາະຈົງ. ຈຳເລີຍຈະບັນຣະຍາຍໃບແຈ້ງການເຫລົ່າ ນີ້ແລະ ການປ້ອງກັນການດຳເນີນການທາງສານຢູ່ໃນກົດຣະບຽບຂອງຣັດ.

**E.** ການປົກຄອງ & ການປະສານຮ່ວມມືກັນ

ການຕົກລົງເຫັນພ້ອມນຳກັນຈະເພີ້ມບົດບາດຂອງຄອບຄົວ ແລະ ຊາວຫນຸ່ມຂື້ນໃນການທຳການຕັດສິນໃຈກ່ຽວກັບ ວ່າການປິ່ນປົວ WISe ຈະຈະຖືກເອົາໃຫ້ໄດ້ຢ່າງໃດ. ຈຳເລີຍຈະເຊີນເອົາຄອບຄົວ, ຊາວຫນຸ່ມ ແລະ ຜູ້ຕາງຫນ້າ ຂອງຊຸມນຸມຊົນທ້ອງຖິ່ນໃຫ້ເຂົ້າຮ່ວມນຳໃນກຸ່ມປົກຄອງທ້ອງຖິ່ນ. ກຸ່ມເຫລົ່ານີ້ໄດ້ຖືກເອີ້ນວ່າແມ່ນ Family Youth and System Partner Round-Tables (FYSPRT). ເຂົາເຈົ້າຈະໃຫ້ຄວາມເຫັນກ່ຽວກັບຫົນທາງທີ່ການ ປິ່ນປົວຄວນຈະຖືກຄວບຄຸມນຳ ແລະ ເອົາໃຫ້.

ຈຳເລີຍຍັງຈະມີການຕົກລົງເຫັນພ້ອມນຳຫ້ອງການທີ່ຮັບໃຊ້ຊາວຫນຸ່ມທົ່ວຣັດ. ອັນນີ້ຈະລວມເອົາຫ້ອງການຂອງກົມ DSHS ແລະ HCA. ການຕົກລົງເຫັນພ້ອມນຳກັນຈະຕ້ອງການການປະສານຮ່ວມມືກັນ ແລະ ການປະສານງານ ນຳການປິ່ນປົວຂອງສະມາຊິກກຸ່ມ. ເມື່ອໃດຊາວຫນຸ່ມໄດ້ຮັບ WISe, ເຂົາເຈົ້າຈະມີຄະນະທີມງານເດັກນ້ອຍ ແລະ ຄອບຄົວທີ່ຈະເວົ້າລົມສົນທະນາເບິ່ງຄວາມຕ້ອງການໃນການປິ່ນປົວ. ຖ້າຫາກວ່າຊາວຫນຸ່ມໄດ້ຖືກຮັບໃຊ້ໂດຍຫ້ອງການ ຫລາຍໆບ່ອນ, ຜູ້ຕາງຫນ້າຈາກທ້ອງຖິ່ນ ແລະ ເຂດຈາກຫ້ອງການເຫລົ່ານັ້ນຈະຖືກເຊີນມາເຂົ້າຮ່ວມໃນຄະນະທີມ ງານເດັກນ້ອຍ ແລະ ຄອບຄົວ. ບ່ອນອອກເງິນທຶນໃຫ້ຍັງຈະຖືກປະສານງານກັນໄດ້ດີກວ່າເກົ່າອີກ.

ຈຳເລີຍຈະເກັບກຳເອົາບັນທຶກກ່ຽວກັບການປິ່ນປົວທີ່ຖືກເອົາໃຫ້. ຈຳເລີຍ ແລະ FYSPRTs ຍັງຈະໃຊ້ບັນທຶກອັນນີ້ ເພື່ອຈະຊ່ວຍທຳກັນຕັດສິນກ່ຽວກັບວ່າຈະສົ່ງເສີມການປິ່ນປົວໄດ້ແນວໃດ.

**F.** ການຄວບຄຸມຄຸນນະພາບ

ຈຳເລີຍຈະອອກແບບແຜນການຮັບປະກັນຄຸນນະພາບ (QAP). ເຂົາເຈົ້າຈະໄດ້ຮັບຄວາມເຫັນຈາກທະນາຍຄວາມ ຂອງໂຈດ ແລະ ຜູ້ທີ່ມີສ່ວນກ່ຽວນຳ. QAP ຈະບັນຣະຍາຍເຖິງເຄື່ອງມືການຮັບປະກັນຄຸນນະພາບ ແລະ ກິຈກັມຈະ ຖືກເຮັດອອກມາພາຍໃຕ້ການຕົກລົງເຫັນພ້ອມນຳກັນອັນນີ້. QAP ອາດຈະກວມທັບກັນນຳຣະບົບ, ໂຄງການ, ແລະ ກິຈກັມການຮັບປະກັນຄຸນນະພາບທີ່ມີຢູ່ແລ້ວອື່ນໆ. QAP ຈະວັດແທກການວາງໃຊ້ ແລະ ຜົນຄືບຫນ້າໄປສູ່ການສອດ ຄ່ອງນຳຄວາມມຸ່ງຫມັ້ນຢູ່ໃນການຕົກລົງເຫັນພ້ອມນຳກັນ.

ຈຳເລີຍຈະວັດແທກຈຳນວນເດັກນ້ອຍຜູ້ທີ່ຖືກຊີ້ຕົວ, ກັ່ນເບິ່ງ, ຕີຣາຄາປະເມີນຜົນເບິ່ງ ແລະ ສົ່ງຕໍ່ໄປຫາ WISe. ຈຳເລີຍຈະເອົາຣາຍຣະອຽດອັນນີ້ໃຫ້ແກ່ສາທາຣະນະຊົນເຣື່ອງການວາງໃຊ້ການຕົກລົງເຫັນພ້ອມນຳກັນອັນນີ້. QAP ຈະຖືກເຮັດສຳເຣັດ ແລະ ຮັບຮູ້ເອົາພາຍໃນນຶ່ງປີຂອງວັນທີທີ່ການຕົກລົງເຫັນພ້ອມນຳກັນໄດ້ຖືກອະນຸມັດ.

**G.** ແຜນການວາງໃຊ້ ແລະ ການດຳເນີນການ

ຈຳເລີຍຈະເຮັດແຜນການວາງໃຊ້ໃຫ້ສຳເຣັດພາຍໃນຫົກເດືອນຂອງການອະນຸມັດຈາກສານຂັ້ນສຸດທ້າຍຂອງການຕົກ ລົງເຫັນພ້ອມນຳກັນ. ຈຳເລີຍຈະໃຊ້ໂຄງຮ່າງຂອງການປົກຄອງທີ່ຖືກບັນຣະຍາຍຢູ່ຂ້າງເທິງນີ້ເພື່ອຈະອອກແບບແຜນ ການວາງໃຊ້. ອັນນີ້ລວມເອົາການໃຊ້ຄວາມເຫັນກ່ຽວກັບ FYSPRTs. ທະນາຍຄວາມສຳລັບຈຳເລີຍຍັງຈະເອົາຄວາມ ເຫັນໃຫ້ອີກຄືກັນ. ຈຳເລີຍຈະຍື່ນແຜນການວາງໃຊ້ທີ່ເຮັດແລ້ວໄປຫາສານເພື່ອການອະນຸມັດ. ຈ່າສານຈະອະນຸມັດແຜນ ການໃຫ້ເທົ່ານັ້ນຖ້າຫາກວ່າຈ່າສານຄິດວ່າແຜນການແມ່ນເຫມາະສົມ.

ເລີ້ມຕົ້ນຕັ້ງແຕ່ເດືອນໂນເວັມເບີ 15, 2014, ຈຳເລີຍຈະເອົາລາຍງານປະຈຳປີໃຫ້ຈ່າສານ, ໂຈດ, ແລະ ສາທາຣະນະ ຊົນ. ລາຍງານໃບນີ້ຈະບັນຣະຍາຍຜົນຄືບຫນ້າຂອງຈຳເລີຍໃນການສອດຄ່ອງນຳຄວາມຮັບຜິດຊອບຂອງເຂົາເຈົ້າພາຍ ໃຕ້ກົນຕົກລົງເຫັນພ້ອມນຳກັນ. ລາຍງານຈະລວມເອົາຄວາມສຳເຣັດ ແລະ ພາລະກິດທີ່ຍັງເຫລືອຢູ່. ມັນຈະຊີ້ບອກບັນ ຫາທີ່ອາດເປັນໄປໄດ້ ຫລື ຕົວຈິງ. ມັນຍັງຈະລວມເອົາການບັນຣະຍາຍສິ່ງທີ່ຖືກເຮັດລົງໄປເພື່ອຈະແກ້ໄຂບັນຫາທີ່ຖືກ ຊີ້ບອກ.

## III. ກົດເກນຂອງການອອກໄປ ແລະ ວິທີທາງ

ພາກສ່ວນຈະຄາດວ່າຈຳເລີຍຈະເຮັດການວາງໃຊ້ການຕົກລົງເຫັນພ້ອມນຳກັນໃຫ້ແລ້ວໃນວັນທີ ຫລື ປະມານເດືອນຈູນ 30, 2018. ຄວາມຮັບຜິດຊອບທຸກໆຢ່າງພາຍໃຕ້ການຕົກລົງເຫັນພ້ອມນຳກັນຈະສິ້ນສຸດລົງຖ້າຫາກວ່າຈຳເລີຍສະແດງໃຫ້ເຫັນວ່າເຂົາເຈົ້າປະຕິບັດຕາມຫລາຍໆຢ່າງນຳກົດເກນຂອງການອອກໄປ. ກົດເກນຂອງການອອກໄປເປັນສິ່ງວັດແທກແນວດຽວເທົ່ານັ້ນທີ່ສາມາດສະແດງໃຫ້ເຫັນວ່າຣັດວໍຊິງຕັນໄດ້ສອດຄ່ອງນຳຄວາມຮັບຜິດຊອບຂອງເຂົາເຈົ້າ, ແລະ ໃນທີ່ນີ້,ອະນຸຍາດໃຫ້ຈ່າສານທີ່ຈະເລີກລົ້ມສຳນວນຄະດີ. ຖ້າຫາກວ່າຣັດວໍຊິງຕັນຢູ່ໃນການປະຕິບັດຕາມຫລວງ ຫລາຍ, ການຟ້ອງຂຶ້ນສານຈະຖືກຍົກເລີກ. ມັນມີກົດເກນການອອກໄປທີ່ຖືກກ່າວຢ່າງລະອຽດສຳລັບເຣື່ອງຕໍ່ລົງໄປນີ້:

- ການເຂົ້າເຖິງ **WISe** ແລະ ການໃຫ້ການບໍຣິການ;
- ການປ້ອງກັນການດຳເນີນການທາງສານ;
- ການຮ່ວມມືກັນ ແລະ ການປົກຄອງຣະບົບ;
- ແຜນການວາງໃຊ້; ແລະ
- ການຄວບຄຸມຄຸນນະພາບ.

## IV. ການເຂົ້າເຖິງຣາຍຣະອຽດຂອງທະນາຍຄວາມຂອງໂຈດ

ທະນາຍຄວາມຂອງໂຈດຈະສອດແນມການວາງໃຊ້ການຕົກລົງເຫັນພ້ອມນຳກັນອັນນີ້. ເຂົາເຈົ້າຈະມີການເຂົ້າເຖິງຣາຍຣະອຽດກ່ຽວກັບຜົນຄືບຫນ້າຂອງຈຳເລີຍ. ໂຈດອາດຈະຕ້ອງການຣາຍຣະອຽດເພີ້ມເຕີມທີ່ບໍ່ມີໄວ້ໃຫ້ເຂົາເຈົ້າພາຍໃຕ້ການຕົກລົງເຫັນພ້ອມນຳກັນ. ຖ້າຫາກວ່າອັນນີ້ເກີດຂຶ້ນ, ເຂົາເຈົ້າສາມາດຮ້ອງຂໍເອົາຣາຍຣະອຽດອັນນັ້ນ; ແຕ່ວ່າເຂົາເຈົ້າຕ້ອງເອົາເຫດຜົນໃຫ້ສຳລັບການຮ້ອງຂໍເອົາຣາຍຣະອຽດ. ຖ້າຫາກວ່າທະນາຍຄວາມຂອງໂຈດຊອກເອົາຣາຍຣະອຽດທີ່ເປັນຄວາມລັບທີ່ຖືກບັນຈຸຢູ່ໃນບັນທຶກຂອງສະມາຊິກກຸ່ມບຸກຄົນ, ເຂົາເຈົ້າຕ້ອງຂໍເອົາໃບອະນຸຍາດໃຫ້ເປີດເຜີຍຈາກສະມາຊິກກຸ່ມນັ້ນ ຫລື ຜູ້ຕາງຫນ້າທີ່ຖືກອະນຸຍາດ. ຖ້າຫາກວ່າເຂົາເຈົ້າບໍ່ສາມາດຂໍເອົາໃບອະນຸຍາດໃຫ້ເປີດເຜີຍໄດ້, ທະນາຍຄວາມຂອງໂຈດຈະຂໍເອົາຄຳສັ່ງຈາກສານສຳລັບການເປີດເຜີຍຣາຍຣະອຽດ.

## V. ຄ່າທຳນຽມ ແລະ ຄ່າໃຊ້ຈ່າຍຂອງທະນາຍຄວາມ

ຂຶ້ນນຳການອະນຸຍາດຈາກສານ, ຈຳເລີຍໄດ້ຕົກລົງເຫັນພ້ອມທີ່ຈະຈ່າຍໃຫ້ທະນາຄວາມຂອງໂຈດສາມລ້ານນຶ່ງຮ້ອຍພັນ ດອນລາ (\$3,100,000.00) ເປັນຄ່າທຳນຽມ ແລະ ຣາຍຈ່າຍຂອງທະນາຍຄວາມ. ຣາຍຣະອຽດແຈ່ມແຈ້ງກ່ຽວກັບວຽກທີ່ທະນາຄວາມຂອງໂຈດໄດ້ເຮັດ ແລະ ຄ່າໃຊ້ຈ່າຍທີ່ຖືກຈ່າຍອອກໄປສາມາດຖືກພົບເຫັນຢູ່ໃນໃບຫນັງສືວຽນທີ່ອູ້ມຊູຄ່າທຳນຽມ ແລະ ຄ່າໃຊ້ຈ່າຍຢູ່ທີ່:

http://www.disabilityrightswa.org/kids-community-based-mental-health

ເພື່ອຈະໄດ້ໂກປີຂອງໃບຫນັງສືວຽນທີ່ ອູ້ມຊູຄ່າທຳນຽມ ແລະ ຄ່າໃຊ້ຈ່າຍ ແລະ ເອກສານອູ້ມຊູ, ຫລື ເພື່ອຈະຖາມຄຳຖາມກ່ຽວກັບຄ່າທຳນຽມ ແລະ ຄ່າໃຊ້ຈ່າຍ, ໂທຫາເລກໂທຟຣີ ຫລື ຂຽນຫາ Disability Rights Washington:

1-800-562-2702

Disability Rights Washington<br>
315 5th Ave S. Suite 850<br>
Seattle, WA 98104

TRLawsuit@dr-wa.org

## **VI.** ຣາຍຣະອຽດເພີ້ມເຕີມ ແລະ ການຟັງເຣື່ອງຄວາມຍຸຕິທັມ

ອັນນີ້ເປັນພຽງແຕ່ສະລູບຄວາມຂອງການຕົກລົງເຫັນພ້ອມນຳກັນ. ຖ້າຫາກວ່າທ່ານຢາກຈະຮຽນຮູ້ເພີ້ມເຕີມກ່ຽວ ກັບການຕົກລົງເຫັນພ້ອມນຳກັນ ຫລື ແລກປ່ຽນຄວາມຄິດຄວາມເຫັນນຳຈ່າສານ, ທ່ານມີທາງເລືອກຫລາຍໆທາງ.

**ຈົ່ງອ່ານການຕົກລົງເຫັນພ້ອມນຳກັນທັງຫມົດ.** ຖ້າຫາກວ່າທ່ານ ຫລື ຄົນໃດຄົນນຶ່ງຜູ້ທີ່ທ່ານຮູ້ຈັກອາດຈະເປັນສະ ມາຊິກກຸ່ມ, ໃຫ້ຮຽນຮູ້ເພີ້ມເຕີມອີກກ່ຽວກັບສິດທິຂອງທ່ານຢູ່ທີ່:

http://www.disabilityrightswa.org/kids-community-based-mental-health

ຢູ່ໃນນັ້ນ, ທ່ານຈະພົບເຫັນຣາຍຣະອຽດເພີ້ມເຕີມ. ແວບໄຊທ໌ຈະມີໂກປີ້ຂອງການຕົກລົງເຫັນພ້ອມນຳກັນທີ່ຖືກວາງ ອອກມາເຕັມຊຸດ. ມັນຍັງລວມເອກສານອີກຄືກັນຊຶ່ງບັນຣະຍາຍການປິ່ນປົວ WISe ແລະ ຈະເຂົ້າເຖິງການປິ່ນປົວເຫລົ່າ ນັ້ນໄດ້ແນວໃດ.

**ຈົ່ງໄປເບິ່ງການປະຊຸມທາງວິດີໂອ ແລະ ການປະຊຸມຣາຍຣະອຽດ.** ທ່ານສາມາດເບິ່ງການປະຊຸມທາງວິດີໂອກ່ຽວກັບ ການຕົກລົງເຫັນພ້ອມນຳກັນອັນນີ້ໄດ້ຢູ່ຕາມສະຖານທີ່ຫລາຍໆບ່ອນທົ່ວຣັດໃນບໍ່ພໍເທົ່າໃດເດືອນຂ້າງຫນ້າ. ມັນຍັງຈະມີ ການສະແດງໃຫ້ເບິ່ງໂດຍບຸກຄົນສອງເທື່ອທີ່ທ່ານສາມາດໄປຮ່ວມໄດ້. ເພື່ອຣາຍຣະອຽດເພີ້ມເຕີມກ່ຽວກັບວັນທີ ແລະ ສະຖານທີ່, ແວ່ເຂົ້າເບິ່ງ:

http://www.disabilityrightswa.org/kids-community-based-mental-health

ຖາມຄຳຖາມ. ການຕົກລົງເຫັນພ້ອມນຳກັນແມ່ນຣາຍຣະອຽດຄົບຖ້ວນທີ່ຍາວ ແລະ ເຕັມຊຸດ. Disability Rights Washington (DRW) ຈະມີເວລາວ່າງເພື່ອຈະຕອບຄຳຖາມຂອງທ່ານ. DRW ເປັນນຶ່ງຂອງອົງການທີ່ຮັບໃຊ້ໃນ ຖານະທະນາຍຄວາມສຳລັບສະມາຊິກກຸ່ມ. ການເວົ້າລົມນຳ DRW ຈະບໍ່ຄິດຄ່າແນວໃດສຳລັບທ່ານ. ທ່ານສາມາດໂທ ຫາເຂົາເຈົ້າຕາມເລກໂທຟຣີທີ່ເລກ1-800-562-2702.

**ສົ່ງຄວາມເຫັນຂອງທ່ານໄປຫາ DRW ຫລື ສານ.** ຄົນໃດຄົນນຶ່ງຜູ້ທີ່ປະສົງຢາກຈະໃຫ້ຄວາມເຫັນກ່ຽວກັບການຕົກລົງ ເຫັນພ້ອມນຳກັນ, ບໍ່ວ່າຈະແມ່ນເຫັນພ້ອມນຳ ຫລື ວ່າຕໍ່ຕ້ານມັນ, ຈະເຮັດໄດ້ໂດຍການສົ່ງໃບຫນັງສືຄວາມເຫັນເຂົ້າ ມາທາງໄປສະນີ, ອີແມລ໌ ຫລື ທາງອື່ນ.

ສົ່ງຄວາມເຫັນໄປຫາ Disability Rights of Washington ໄດ້ທີ່:
Disability Rights Washington
315 5th Ave. S., Suite 850
Seattle, WA 98104
TRLawsuit@dr-wa.org

ຄວາມເຫັນຕ່າງໆທີ່ໄດ້ຮັບໂດຍ DRW, ຫລື ທະນາຍຄວາມຂອງກຸ່ມທຸກໆຄົນຜູ້ທີ່ຖືກບົ່ງຊີ້ຢູ່ໃນສຳນວນຄະດີນີ້, ຈະຖືກເອົາໃຫ້ສານ.

ໃບແຈ້ງການຍັງຈະຖືກເອົາໃຫ້ສານອີກຄືກັນ. ຫນັງສືຄວາມຄິດເຫັນຕ້ອງຖືກຮັບເອົາໂດຍສານບໍ່ກາຍເກີນເດືອນດີເຊັມເບີ 5, 2013. ຄວາມຄິດເຫັນເຫລົ່ານັ້ນຄວນຈະມີ (ຕ້ອງລວມເອົາ) ເລກສຳນວນຄະດີສຳລັບຄະດີນີ້, ຊຶ່ງແມ່ນ: No. C09-1677-TSZ. ສົ່ງຄວາມເຫັນໄປຫາສານໄດ້ທີ່:

Office of the Clerk of the Court
United States District Court for the Western District of Washington, Seattle
700 Stewart St., Ste. 15229,
Seattle, WA 98101

ມາຮ່ວມກັນຟັງເຣື່ອງຄວາມເປັນທັມ.ຄວາມເຫັນປາກເປົ່າຈະຖືກເຣັດໄດ້ຢູ່ໃນການຟັງເຣື່ອງຄວາມເປັນທັມຊຶ່ງຈະຖືກຈັດຂື້ນຢູ່ໃນເ
ມືອງຊີອາເຕີນໃນວັນພະຫັດ,ເດືອນດີເຊັມເບີ 19, 2013 ໃນເວລາ 10:00 ໂມງເຊົ້າ.

ທີ່ຢູ່ທີ່ຈະມາປາກົດຕົວສຳລັບການຟັງເຣື່ອງແມ່ນ:

ຫ້ອງສານຂອງຈ່າສານ Honorable Thomas S. Zilly
United States District Court for the Western District of Washington, Seattle
700 Stewart Street, Floor 15
Seattle, WA 98101